ຈື່ໃວ້ໃນປະຕິທິນຂອງທ່ານ:

# ເປັນວັນຍ່າງໄປໂຮງຮຽນແຫ່ງຊາດ

ເຖິງພໍ່ແມ່ທັ້ງຫລາຍ:

ພວກເຮົາມີຄວາມຍິນດີປະກາດວ່າໂຮງຮຽນຂອງພວກເຮົາຈະຮ່ວມກັບວັນຍ່າງໄປໂຮງຮຽນແຫ່ງຊາດ ໃນວັນພຸດເດືອນຕຸລາຄົມ ເຫັດການນີ້ງ່າຍ ໆ ໃນວັນນັ້ນ: ນັກຮຽນ, ພໍ່ແມ່, ຜູ້ປົກຄອງ, ນາຍຄູ ຈະຍ່າງໄປໂຮງຮຽນ ນຳກັນ

ການຍ່າງໃນວັນນີ້ ທ່ານຈະຊ່ວຍຮຽກຮ້ອງໃຫ້:

- ✓ ສອນຄວາມປອດພັຍໃຫ້ເດັກຮູ້ກ່ຽວກັບການຈະຣາຈອນ
- ✓ ສອນໃຫ້ຜູ້ໃຫຍ່ຂັບຣົດຍ່າງປອດພັຍເມື່ອໃກ້ໂຮງຮຽນ.
- ✓ ສ້າງແລະຮັກສາໃຫ້ການຍ່າງຂອງເດັກປອດພັຍ, ໂດຍຊະເພາະການຍ່າງໄປມາຈາກໂຮງຮຽນ
- ✓ ຊີ້ໃຫ້ຮູ້ຈັກການເລືອກໂຄງການທີ່ຈະຊ່ວຍເຮັດໃຫ້ສັງຄົມເປັນມິດຕໍ່ຜູ້ຍ່າງ
- ✓ ສົ່ງເສີມຄວາມຈິງທີ່ວ່າເດັກຕ້ອງໄດ້ອອກກຳລັງກາຍສະເມີເພື່ອຈະມີສຸຂະພາບແຂັງແຮງ
- ✓ ສະນັບສະນຸນໃຫ້ຄອບຄົວມີຄວາມມ່ວນຊື່ນແລະໃຊ້ເວລາໃນການຍ່າງນຳກັນ ຊຶ່ງເປັນສິ່ງງ່າຍທີ່ຈະຮັກສາສຸຂະພາບໃຫ້ດີ

ຂໍໃຫ້ພວກເຮົາຮ່ວມໃຈກັນເຮັດໃຫ້ສັງຄົມຂອງເຮົາເປັນທີ່ນ່າຍ່າງສຳຫຣັບເດັກຫລາຍຂື້ນ ທ່ານຊ່ວຍໄດ້ໂດຍການຍ່າງໄປໂຮງຮຽນກັບເດັກນ້ອຍໃນເດືອນຕຸລາຄົມວັນທີ່

ຂໍສະແດງຄວາມນັບຖື,

ຖ້າທ່ານຢາກຊ່ວຍໃນງານນີ້ແລະຍ່າງນຳ, ຂໍຕິດຕໍ່ກັບສະຖານທີ່ຂ້າງລ່າງນີ້

---

ຖ້າທ່ານແລະຫລືເດັກຂອງທ່ານກຳລັງຍ່າງໄປມາຈາກໂຮງຮຽນຢູ່ແລ້ວ ງານນີ້ຈະເປັນການຂອບຄຸນຫລືເຫັນຄວາມສຳຄັນຂອງການຍ່າງ ແລະຈະສະນັບສະນຸນໃຫ້ເດັກຍ່າງຕໍ່ໄປຫຍ່າງປອດພັຍ

ຖ້າເດັກຂອງທ່ານບໍ່ໄດ້ຍ່າງໄປໂຮງຮຽນຫລືບໍ່ໄດ້ຍ່າງຕະລອດ - ງານນີ້ຈະເປັນການຊ່ວຍໃຫ້ທ່ານຮູ້ຈັກທາງຍ່າງໄປມາຈາກໂຮງຮຽນຂອງທ່ານ ທ່ານສາມາດເວົ້າເຖິງຄວາມອັນຕະລາຍຕ່າງ ໆ - ແລະສິ່ງທີ່ດີຫລືສິ່ງທີ່ງາມເມື່ອຍ່າງໄປນຳກັນ

ຖ້າຫາກທ່ານຢູ່ໄກເກີນທີ່ຈະຍ່າງໄປໂຮງຮຽນ ຫລືມີສິ່ງອັນຕະລາຍລະຫວ່າງທາງ ທ່ານສາມາດເຮັດໄດ້ໂດຍການແບ່ງເປັນສອງສ່ວນ ຂັບຣົດສ່ວນຫນຶ່ງແລະຍ່າງຕໍ່ໄປກັບລູກອີກສ່ວນຫນຶ່ງຈົນເຖິງໂຮງຮຽນ ທ່ານຈະໄດ້ຮຽນຮູ້ຫລາຍຢ່າງຈາກການຍ່າງໄປໂຮງຮຽນ

**Lao**